*Journal of Science and Teacher Education (JLSTE), 2*(1), 213-222
**P-ISSN**: 3078-5405; **E-ISSN**: 3080-2628

# ການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາໂຮງຮຽນ ລ້ຽງເດັກ-ອະນຸບານ-ປະຖົມສົມບູນພາກເອກະຊົນ ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ

*ເມືອງໄຊ ແສງຂັນຄຳ*, ສົມສະນິດ ວົງຄຳຈັນ ແລະ ສາຍຄຳ ພົມມະທັດ*
*ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ*

## ບົດຄັດຫຍໍ້

ການຄົ້ນຄວ້າຄັ້ງນີ້ ມີຈຸດປະສົງ 1) ເພື່ອສຶກສາສະພາບການປະຕິບັດ 3 ຂໍ້ແຂ່ງຂັນ; 2) ເພື່ອສຶກສາແນວທາງການປະຕິບັດ 3 ຂໍ້ແຂ່ງຂັນ 3) ເພື່ອສຶກສາຂໍ້ສະເໜີແນະແນວທາງ ການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ໂຮງຮຽນລ້ຽງເດັກອະນຸບານ-ປະຖົມສົມບູນພາກເອກະຊົນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ການຄົ້ນຄວ້ານີ້ແມ່ນປະສົມປະສານລະຫວ່າງປະລິມານ ແລະ ຄຸນະພາບ ເຊິ່ງເກັບກຳຂໍ້ມູນຈາກຜູ້ບໍລິຫານ ແລະ ຄູສອນ ຈຳນວນ 216 ທ່ານ, ຜູ້ອຳນວຍການໂຮງຮຽນ 13 ທ່ານ, ຫົວໜ້າ ແລະ ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ 3 ທ່ານ ແລະ ທ່ານພະແນກສຶກສາທິການ ແລະ ກິລາຈຳນວນ 6 ທ່ານ. ຜົນການຄົ້ນຄວ້າພົບວ່າ ສະພາບການປະຕິບັດ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ ໂດຍລວມແມ່ນຢູ່ໃນລະດັບຫຼາຍ ($\mu$=4.06,$\sigma$=0.03) ໂດຍເລີ່ມຈາກດ້ານການສ້າງສະພາບແວດລ້ອມທີ່ດີໃນໂຮງຮຽນ ($\mu$= 4.14, $\sigma$= 0.03) ດ້ານການຕ້ານປະກົດການຫຍໍ້ທໍ້ ($\mu$= 4.05, $\sigma$=0.09) ແລະ ດ້ານການສອນດີ - ດ້ານການຮຽນເກັ່ງ ($\mu$= 3.99, $\sigma$=0.04). ເພື່ອເຮັດໃຫ້ການປະຕິບັດ 3 ຂໍ້ແຂ່ງຂັນໃຫ້ໄດ້ດີຍິ່ງຂຶ້ນ ການຄົ້ນຄວ້ານີ້ແນະນຳໃຫ້ພັດທະນາຄູໃຫ້ມີຄຸນນະພາບດ້ວຍການຈັດການຮຽນການສອນແບບ Active Learning, ສ້າງກົນໄກການສື່ສານກັບຜູ້ປົກຄອງ ແລະ ສົ່ງເສີມນັກຮຽນເກັ່ງຢ່າງຕໍ່ເນື່ອງ. ຕ້ອງມີຄວາມເຂັ້ມງວດຂອງລະບຽບການ, ຝຶກອົບຮົມພະນັກງານປ້ອງກັນພາຍໃນ ແລະ ຮ່ວມມືກັບການຈັດຕັ້ງຂັ້ນບ້ານ. ນອກນັ້ນ ຕ້ອງປັບປຸງສິ່ງອຳນວຍຄວາມສະດວກ, ສືບຕໍ່ໂຄງການໂຮງຮຽນສີຂຽວ ແລະ ຈັດການຂີ້ເຫຍື້ອຢ່າງເປັນລະບົບ.

***ຄຳສັບສຳຄັນ:*** *3 ຂໍ້ແຂ່ງຂັນ, ໂຮງຮຽນເອກະຊົນ, ການບໍລິຫານການສຶກສາ, ຄຸນນະພາບການສຶກສາ*

**ຕິດຕໍ່ພົວພັນ: ເມືອງໄຊ ແສງຂັນຄຳ; ໂທ: 020 59847717;*
*ອີເມວ: muangxay7@gmail.com*

**ຂໍ້ມູນບົດຄວາມ**
Received 6 December 2025
Received in revised form 6 January 2026
Accepted 15 January 2026

This is an open access article under the CC BY license (https://creativecommons.org/licenses/by/4.0/)

# A Study of the Implementation of the Three Competition Initiatives in Private Nursery–Kindergarten–Primary Schools in Xaysettha District, Vientiane Capital

*Muangxay Sengkhunkham*, Somsanith Vongkhamchanh and Saykham Phommathat*
*Faculty of Education, The National University of Laos*

**Abstract**

This study aimed (1) to examine the current implementation of the three Competition initiatives, (2) to investigate approaches for implementing the Three Competition initiatives, and (3) to explore recommendations for improving their implementation in the education sector of private kindergarten–primary schools in Xaysettha District, Vientiane Capital. A mixed-methods research design combining quantitative and qualitative approaches was employed. Data were collected from 216 administrators and teachers, 13 school principals, 3 heads and deputy heads of the District Education and Sports Office, and 6 officials from the Department of Education and Sports. The results revealed that the overall implementation of the Three Competition initiatives in the education and sports sector was at a high level ($\mu = 4.06$, $\sigma = 0.03$). Among the evaluated aspects, creating a positive school environment had the highest mean score ($\mu = 4.14$, $\sigma = 0.03$), followed by the prevention of negative behaviors ($\mu = 4.05$, $\sigma = 0.09$), and effective teaching and excellent learning ($\mu = 3.99$, $\sigma = 0.04$). To further improve the implementation of the Three Competition initiatives, the study recommends enhancing teacher quality through active learning approaches, strengthening communication mechanisms with parents, and continuously promoting academically outstanding students. In addition, stricter enforcement of regulations, training of internal security personnel, and cooperation with community-level organizations are necessary. Furthermore, improvements in school facilities, continuation of green school initiatives, and systematic waste management should be promoted to support a better educational environment.

***Keywords:*** *Three competitions, Private school, Educational administration, School management, Education quality, Learning quality.*

**ARTICLE INFO**

Received 6 December 2025
Received in revised form 6 January 2026
Accepted 15 January 2026

**Correspondence: Muangxay Sengkhunkham; Tel: 020 59847717; Email: muangxay7@gmail.com*

## 1. ພາກສະເໜີ

*1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ການພັດທະນາການສຶກສາເປັນໜຶ່ງໃນວຽກງານບຸລິມະສິດສູງສຸດຂອງພັກ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫຼື ສປປ ລາວ ເພື່ອສ້າງຊັບພະຍາກອນມະນຸດທີ່ມີຄຸນນະພາບ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ. ໃນກອບນະໂຍບາຍດັ່ງກ່າວ, ກະຊວງສຶກສາທິການ ແລະ ກິລາໄດ້ວາງຍຸດທະສາດ ແລະ ແຜນພັດທະນາການສຶກສາແຫ່ງຊາດໄລຍະຕ່າງໆ ໂດຍມີຈຸດປະສົງເພື່ອຍົກລະດັບຄຸນນະພາບການສຶກສາໃຫ້ສູງຂຶ້ນຢ່າງຕໍ່ເນື່ອງ. ໜຶ່ງໃນກົນໄກສຳຄັນທີ່ຖືກນຳໃຊ້ເພື່ອຂັບເຄື່ອນຄຸນນະພາບການສຶກສາຄື 3 ຂໍ້ແຂ່ງຂັນ ຂໍ້ແຂ່ງຂັນເຫຼົ່ານີ້ຖືກອອກແບບມາເພື່ອສົ່ງເສີມການພັດທະນາຮອບດ້ານຂອງນັກຮຽນ, ຍົກລະດັບຄວາມສາມາດຂອງຄູ-ອາຈານ, ແລະສ້າງສະພາບແວດລ້ອມການຮຽນຮູ້ທີ່ເອື້ອອຳນວຍ (ກະຊວງສຶກສາທິການ ແລະ ກິລາ, 2017) ການສົ່ງເສີມການພັດທະນາໂຮງຮຽນຕາມ 3 ຂໍ້ແຂ່ງຂັນ ຊຸກຍູ້ໃຫ້ໂຮງຮຽນມີການບໍລິຫານຈັດການທີ່ມີປະສິດທິພາບ, ມີການວາງແຜນພັດທະນາທີ່ຊັດເຈນ, ແລະ ສາມາດແກ້ໄຂບັນຫາຕ່າງໆໄດ້ດ້ວຍຕົນເອງ ການທີ່ໂຮງຮຽນເອກະຊົນສາມາດປະຕິບັດ 3 ຂໍ້ແຂ່ງຂັນ ຈະເຮັດໃຫ້ໂຮງຮຽນມີຄວາມເຂັ້ມແຂງ, ມີຄວາມພ້ອມໃນການຮັບມືກັບການປ່ຽນແປງ, ແລະ ສາມາດພັດທະນາຢ່າງຍືນຍົງ. ນີ້ຍັງເປັນການປະກອບສ່ວນເຂົ້າໃນການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການສຶກສາໂດຍລວມຂອງປະເທດ.

ການພັດທະນາການສຶກສາແມ່ນພື້ນຖານສຳຄັນຂອງການພັດທະນາຊັບພະຍາກອນມະນຸດ ເຊິ່ງເປັນກຳລັງຫຼັກໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດ. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບຮູ້ເຖິງຄວາມສຳຄັນດັ່ງກ່າວ ແລະ ໄດ້ກຳນົດນະໂຍບາຍຕ່າງໆ ເພື່ອສົ່ງເສີມ ແລະ ພັດທະນາການສຶກສາຢ່າງຕໍ່ເນື່ອງ. ກະຊວງສຶກສາທິການ ແລະ ກິລາ ໄດ້ວາງຍຸດທະສາດ ແລະ ແຜນພັດທະນາການສຶກສາແຫ່ງຊາດ ເພື່ອຍົກສູງຄຸນນະພາບການສຶກສາໃນທຸກລະດັບ (ກະຊວງສຶກສາທິການ ແລະ ກິລາ, 2020)

ແຕ່ເດີມ, ການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນແມ່ນເນັ້ນໃສ່ໂຮງຮຽນຂອງລັດເປັນຫຼັກ, ແຕ່ດ້ວຍການຂະຫຍາຍຕົວຂອງພາກເອກະຊົນເຂົ້າຮ່ວມໃນການພັດທະນາການສຶກສາ, ໂດຍສະເພາະ

ໂຮງຮຽນ ລ້ຽງເດັກ-ອະນຸບານ-ປະຖົມສົມບູນ, ການພິຈາລະນານຳໃຊ້ຂໍ້ແຂ່ງຂັນເຫຼົ່ານີ້ເຂົ້າໃນໂຮງຮຽນເອກະຊົນຈຶ່ງກາຍເປັນສິ່ງຈຳເປັນ. ໂຮງຮຽນພາກເອກະຊົນມີບົດບາດສຳຄັນໃນການສະໜອງທາງເລືອກດ້ານການສຶກສາທີ່ຫຼາກຫຼາຍ ແລະ ຕອບສະໜອງຄວາມຕ້ອງການຂອງສັງຄົມທີ່ເພີ່ມຂຶ້ນ.ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ເປັນພື້ນທີ່ທີ່ມີການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ຈຳນວນປະຊາກອນຢ່າງວ່ອງໄວ, ເຮັດໃຫ້ມີການກໍ່ຕັ້ງໂຮງຮຽນພາກເອກະຊົນຈຳນວນຫຼາຍ ເພື່ອຮອງຮັບຄວາມຕ້ອງການດ້ານການສຶກສາຂອງເດັກນ້ອຍໃນທ້ອງຖິ່ນ. ດັ່ງນັ້ນ, ການສຶກສາຄວາມເປັນໄປໄດ້ ແລະ ຜົນກະທົບຂອງການນຳໃຊ້ 3 ຂໍ້ແຂ່ງຂັນເຂົ້າໃນໂຮງຮຽນປະເພດນີ້ຈຶ່ງເປັນສິ່ງສຳຄັນ ເພື່ອຮັບປະກັນວ່າຄຸນນະພາບການສຶກສາໂດຍລວມຂອງຊາດໄດ້ຮັບການຍົກລະດັບຢ່າງທົ່ວເຖິງ (ບົດລາຍງານການປະເມີນຄຸນນະພາບການສຶກສາ, 2022).

ການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນໃນໂຮງຮຽນ ລ້ຽງເດັກ-ອະນຸບານ-ປະຖົມສົມບູນພາກເອກະຊົນ ບໍ່ພຽງແຕ່ເປັນການປະຕິບັດຕາມນະໂຍບາຍຂອງກະຊວງເທົ່ານັ້ນ, ແຕ່ຍັງມີຄວາມສຳຄັນຫຼາຍດ້ານຕໍ່ການພັດທະນາຄຸນນະພາບການສຶກສາໃນລະດັບຊາດ. ຄວາມສຳຄັນດ້ານທຳອິດ ແມ່ນການ ຍົກລະດັບຄຸນນະພາບການຮຽນ-ການ ສົ່ງເສີມໃຫ້ຄູ-ອາຈານພັດທະນາຕົນເອງຢ່າງຕໍ່ເນື່ອງ, ນຳໃຊ້ວິທີການສິດສອນທີ່ຫຼາກຫຼາຍ ແລະທັນສະໄໝ, ເນັ້ນການສອນທີ່ເນັ້ນຜູ້ຮຽນເປັນໃຈກາງ, ແລະສ້າງບັນຍາກາດການຮຽນຮູ້ທີ່ໜ້າສົນໃຈ. ສຳລັບນັກຮຽນ, ຂໍ້ແຂ່ງຂັນນີ້ກະຕຸ້ນໃຫ້ເກີດຄວາມກະຕືລືລົ້ນໃນການຮຽນ, ມີຄວາມຮັບຜິດຊອບຕໍ່ການຮຽນຂອງຕົນເອງ, ແລະພັດທະນາທັກສະທີ່ຈຳເປັນໃນສັດຕະວັດທີ 21. ໂດຍຜ່ານການແຂ່ງຂັນນີ້, ໂຮງຮຽນພາກເອກະຊົນຈະໄດ້ຮັບການຊຸກຍູ້ໃຫ້ປັບປຸງຫຼັກສູດ ແລະວິທີການສອນໃຫ້ມີປະສິດທິພາບຫຼາຍຂຶ້ນ, ເຊິ່ງຈະສົ່ງຜົນດີຕໍ່ການພັດທະນາສັກກະຍະພາບຂອງເດັກນ້ອຍຢ່າງຮອບດ້ານ ໃນນັ້ນ, 3 ຂໍ້ແຂ່ງຂັນໄດ້ຖືກນຳໃຊ້ເປັນກົນໄກສຳຄັນໃນການກະຕຸ້ນ ແລະ ຊຸກຍູ້ການພັດທະນາຄຸນນະພາບການສຶກສາທັງພາກລັດ ແລະ ເອກະຊົນ (ກົມຈັດຕັ້ງ ແລະ ພະນັກງານ ເລກທີ 37/ສສກ.ຈຕນະຄອນຫຼວງວຽງຈັນ, ວັນທີ 08 JAN 2013, 2013)

ແນວຄວາມຄິດຂອງ 3 ຂໍ້ແຂ່ງຂັນນີ້ໄດ້ຖືກລິເລີ່ມຂຶ້ນເພື່ອເປັນການສ້າງແຮງຈູງໃຈ ແລະ ສົ່ງເສີມການແຂ່ງຂັນທີ່ສ້າງສັນພາຍໃນຂະແໜງການສຶກສາ. ເປົ້າໝາຍສຳຄັນແມ່ນເພື່ອຍົກສູງມາດຕະຖານການຮຽນ-ການສອນ, ພັດທະນາສັກກະຍະພາບຂອງນັກຮຽນໃຫ້ເຕັມສ່ວນ, ແລະ ສ້າງສະພາບແວດລ້ອມການຮຽນຮູ້ທີ່ເອື້ອອຳນວຍ. ການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນບໍ່ພຽງແຕ່ເປັນການວັດແທກຜົນສຳເລັດ ແຕ່ຍັງເປັນເຄື່ອງມືໃນການຕິດຕາມ, ປະເມີນຜົນ, ແລະ ປັບປຸງວຽກງານການສຶກສາຢ່າງຕໍ່ເນື່ອງ. ການລາຍງານການປະເມີນຄຸນນະພາບການສຶກສາແຫ່ງຊາດໄດ້ສະແດງໃຫ້ເຫັນວ່າ ການຈັດຕັ້ງປະຕິບັດນະໂຍບາຍຕ່າງໆ ລວມທັງ 3 ຂໍ້ແຂ່ງຂັນ ມີບົດບາດສຳຄັນໃນການປັບປຸງຄຸນນະພາບການສຶກສາໃນຂອບເຂດກວ້າງ (ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ., 2018)

ໃນຊຸມປີຜ່ານມາ, ການສຶກສາພາກເອກະຊົນໄດ້ມີບົດບາດເພີ່ມຂຶ້ນຢ່າງເດັ່ນຊັດໃນການປະກອບສ່ວນເຂົ້າໃນການພັດທະນາການສຶກສາຂອງປະເທດ (ວຽງແກ້ວ ພົມມະສານ, 2019) ໂດຍສະເພາະຢູ່ເຂດເມືອງທີ່ມີການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມສູງ ເຊັ່ນ: ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ, ໂຮງຮຽນລ້ຽງເດັກອະນຸບານ-ປະຖົມສົມບູນພາກເອກະຊົນໄດ້ຮັບຄວາມນິຍົມເພີ່ມຂຶ້ນ ເນື່ອງຈາກຄວາມຫຼາກຫຼາຍຂອງຫຼັກສູດ, ການບໍລິການທີ່ທັນສະໄໝ, ແລະ ການຕອບສະໜອງຄວາມຕ້ອງການຂອງຜູ້ປົກຄອງທີ່ຊອກຫາການສຶກສາທີ່ມີຄຸນນະພາບສູງໃຫ້ແກ່ ລູກ - ຫຼານ

ການຈັດຕັ້ງປະຕິບັດນະໂຍບາຍ ແລະ ມາດຕະການຕ່າງໆຂອງລັດຖະບານ ເຂົ້າໃນສະຖາບັນການສຶກສາພາກເອກະຊົນໂດຍສະເພາະ "3 ຂໍ້ແຂ່ງຂັນ" ນັ້ນຍັງຄົງເປັນສິ່ງທ້າທາຍ ແລະຮຽກຮ້ອງໃຫ້ມີການສຶກສາຄົ້ນຄວ້າຢ່າງລະອຽດ ເພື່ອໃຫ້ເຂົ້າໃຈເຖິງສະພາບການຈັດຕັ້ງປະຕິບັດ, ຜົນສຳເລັດ, ຂໍ້ຈຳກັດ, ແລະ ສິ່ງທ້າທາຍທີ່ພົບພໍ້.ການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ ເຂົ້າໃນໂຮງຮຽນລ້ຽງເດັກອະນຸບານ-ປະຖົມສົມບູນພາກເອກະຊົນ ເມືອງໄຊເສດຖາ ມີຄວາມສຳຄັນຫຼາຍດ້ານຄື: ຍົກສູງຄຸນນະພາບການສຶກສາ: 3 ຂໍ້ແຂ່ງຂັນ" ເປັນເຄື່ອງມືໃນການຊຸກຍູ້ໃຫ້ຄູ-ອາຈານພັດທະນາການສອນ, ນັກຮຽນພັດທະນາການຮຽນ, ແລະ ໂຮງຮຽນພັດທະນາຕົນເອງ (ພົມມະຈັນ ສິດທິປັນຍາ, 2020).

ການຈັດຕັ້ງປະຕິບັດຂໍ້ແຂ່ງຂັນເຫຼົ່ານີ້ຢ່າງມີປະສິດທິຜົນໃນໂຮງຮຽນເອກະຊົນ ຈະຊ່ວຍຮັບປະກັນວ່າໂຮງຮຽນເຫຼົ່ານີ້ມີມາດຕະຖານຄຸນນະພາບສູງ ແລະ ສາມາດຜະລິດນັກຮຽນທີ່ມີຄວາມຮູ້, ຄວາມສາມາດ, ແລະ ມີຄຸນສົມບັດ. ນອກຈາກນີ້, ຍັງເປັນການສົ່ງເສີມໃຫ້ໂຮງຮຽນພາກເອກະຊົນມີສ່ວນຮ່ວມໃນການບັນລຸເປົ້າໝາຍການພັດທະນາການສຶກສາແຫ່ງຊາດ (ສີສຸກ ໄຊຍະລາດ, 2017).

ການແຂ່ງຂັນສອນດີ-ສອນເກັ່ງ ສົ່ງເສີມໃຫ້ຄູ-ອາຈານມີການພັດທະນາວິທີສອນ, ນຳໃຊ້ສື່ການຮຽນການສອນທີ່ຫຼາກຫຼາຍ, ແລະ ສ້າງບັນຍາກາດການຮຽນຮູ້ທີ່ໜ້າສົນໃຈ. ສ່ວນການແຂ່ງຂັນຮຽນດີ-ຮຽນເກັ່ງ ກະຕຸ້ນໃຫ້ນັກຮຽນມີຄວາມຕັ້ງໃຈຮຽນ, ສຶກສາຄົ້ນຄວ້າດ້ວຍຕົນເອງ, ແລະ ພັດທະນາທັກສະຕ່າງໆ. ສິ່ງເຫຼົ່ານີ້ລ້ວນແຕ່ປະກອບສ່ວນສ້າງສະພາບແວດລ້ອມການຮຽນຮູ້ທີ່ເອື້ອອຳນວຍຕໍ່ການພັດທະນາຮອບດ້ານຂອງນັກຮຽນ, ໂດຍສະເພາະໃນລະດັບອະນຸບານ ແລະ ປະຖົມສົມບູນ ເຊິ່ງເປັນຊ່ວງໄວສຳຄັນຂອງການວາງພື້ນຖານການຮຽນຮູ້ (ສົມຈິດ, 2018). ການສຶກສາຄົ້ນຄວ້າກ່ຽວກັບການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນໃນໂຮງຮຽນເອກະຊົນ ຈະເປັນຂໍ້ມູນທີ່ສຳຄັນໃຫ້ແກ່ພາກລັດ, ໂດຍສະເພາະກະຊວງສຶກສາທິການ ແລະ ກິລາ, ໃນການປະເມີນປະສິດທິຜົນຂອງນະໂຍບາຍ, ກົນໄກ, ແລະ ມາດຕະການຕ່າງໆ.

**P-ISSN**: 3078-5405; **E-ISSN**: 3080-2628

ທອງເພັດ ວິໄລວັນ (2021) ພົບວ່າຜົນການສຶກສາຈະຊ່ວຍໃຫ້ສາມາດລະບຸຈຸດແຂງ, ຈຸດອ່ອນ, ແລະ ສິ່ງທ້າທາຍ ເພື່ອນໍາໄປສູ່ການປັບປຸງແຜນການ, ນະໂຍບາຍ, ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງກັບການຄຸ້ມຄອງ ແລະ ສົ່ງເສີມການສຶກສາພາກເອກະຊົນໃຫ້ມີປະສິດທິພາບຍິ່ງຂຶ້ນ.

ໂດຍລວມແລ້ວ, ການສຶກສາເຖິງການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ ເຂົ້າໃນໂຮງຮຽນລ້ຽງເດັກອະນຸບານ-ປະຖົມສົມບູນພາກເອກະຊົນ ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ຈຶ່ງມີຄວາມສໍາຄັນຢ່າງຍິ່ງ. ມັນເປັນການຮັບປະກັນວ່າໂຮງຮຽນເອກະຊົນກໍມີສ່ວນຮ່ວມໃນການຍົກລະດັບຄຸນນະພາບການສຶກສາຕາມມາດຕະຖານທີ່ກະຊວງກໍານົດ, ສົ່ງເສີມການພັດທະນາການຮຽນ-ການສອນ, ສ້າງໂຮງຮຽນໃຫ້ເປັນສູນກາງການພັດທະນາຊຸມຊົນ, ແລະສ້າງສະພາບແວດລ້ອມການຮຽນຮູ້ທີ່ຍືນຍົງ. ຜົນໄດ້ຮັບຈາກການສຶກສານີ້ຈະເປັນຂໍ້ມູນສໍາຄັນໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງໃນການວາງນະໂຍບາຍ, ປັບປຸງກົນໄກການຕິດຕາມກວດກາ, ແລະສົ່ງເສີມການພັດທະນາຄຸນນະພາບການສຶກສາຂອງຊາດໃຫ້ມີປະສິດທິພາບຍິ່ງຂຶ້ນ.

*1.2. ຄໍາຖາມຂອງການຄົ້ນຄ້ວາ*

1) ການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ໂຮງຮຽນລ້ຽງເດັກອະນຸບານ-ປະຖົມສົມບູນພາກເອກະຊົນ ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ເປັນຄືແນວໃດ?

2) ແນວທາງໃນການປັບປຸງການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ໂຮງຮຽນ ລ້ຽງເດັກ-ອະນຸບານ-ປະຖົມສົມບູນພາກເອກະຊົນ  ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ຄວນເປັນຄືແນວໃດ?

3) ຜົນຂອງຂໍ້ສະເໜີແນະແນວທາງໃນການປັບປຸງການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາໂຮງຮຽນລ້ຽງເດັກອະນຸບານ-ປະຖົມສົມບູນພາກເອກະຊົນ  ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນມີຄວາມເປັນປະໂຫຍດ, ມີຄວາມເປັນໄປໄດ້, ມີຄວາມເໝາະສົມ ແລະ ມີຄວາມສອດຄ່ອງ ຫຼື ບໍ່?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

1) ເພື່ອສຶກສາສະພາບການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ໂຮງຮຽນ ລ້ຽງເດັກ-ອະນຸບານ-ປະຖົມສົມບູນພາກເອກະຊົນ  ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ

2) ເພື່ອສຶກສາແນວທາງ ການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ໂຮງຮຽນ ລ້ຽງເດັກ-ອະນຸບານ-ປະຖົມສົມບູນພາກເອກະຊົນ  ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ

3) ເພື່ອສຶກສາຂໍສະເໜີແນະແນວທາງ ການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ໂຮງຮຽນ ລ້ຽງເດັກອະນຸບານ-ປະຖົມສົມບູນພາກເອກະຊົນ  ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ດອນມະນີ ໄຊຍະລາດ (2017) ພົບວ່າການມີສ່ວນຮ່ວມຂອງຜູ້ບໍລິຫານ . ຄູອາຈານ ແລະ ນັກສຶກສາ ໃນການ ປະຕິບັດ 3 ຂໍ້ແຂ່ງຂັນຂະແໜງການສຶກສາ ແລະ ກິລາ ທີ່ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ຜົນການຄົ້ນຄວ້າພົບວ່າ: ລະດັບການມີສ່ວນຮ່ວມຂອງຜູ້ບໍລິຫານ, ຄູອາຈານ ແລະ ນັກສຶກສາໃນການປະຕິບັດ 3 ຂໍ້ ແຂ່ງຂັນຂະແໜງການສຶກສາ ແລະ ກິລາ ທີ່ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ໂດຍຢູ່ ໃນລະດັບຫຼາຍເພື່ອພິຈະລະນາເປັນແຕ່ລະດ້ານພົບວ່າທຸກດ້ານຢູ່ໃນລະດັບຫຼາຍ, ຜົນປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ, ຄູອາຈານ ແລະ ນັກສຶກສາມີຄວາມຄິດເຫັນກ່ຽວ ກັບການມີສ່ວນຮ່ວມໃນການປະຕິບັດ 3 ຂໍ້ແຂ່ງຂັນຄະແນນການສຶກສາ ແລະ ກິລາທີ່ຄະນະສຶກສາ ສາດ ມະຫາວິທະຍາໄລແຫ່ງຊາດໂດຍສະພາບລວມຈໍາແນກຕາມເພດ, ຕໍາແໜ່ງປະສົບການເຮັດວຽກ, ປີຮຽນ ແລະ ພາກວິຊາທີແຕກຕ່າງກັນຄວາມຄິດເຫັນກ່ຽວກັບການປະຕິບັດ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະກິລາ ທີ່ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ໂດຍລວມແຕ່ລະດ້ານບໍ່ ແຕກຕ່າງກັນ, ຄວາມຮູ້ສຶກສາຂອງໂຄງບໍລິຫານຄູອາຈານ ແລະ ນັກສຶກສາຕໍ່ການມີສ່ວນຮ່ວມໃນການ ປະຕິບັດ3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະກິລາ ຄະນະສຶກສາສາດມະຫາວິທະຍາໄລແຫ່ງຊາດ ສັງລວມໂດຍຫຍໍ້ພົບວ່າ: ຄວາມຮູ້ສຶກຂອງຜູ້ບໍລິຫານແລະຄູອາຈານ ດ້ານສອນດີສອນເກັ່ງ ແລະ ດ້ານການຕ້ານ ປະກົດການຫຍໍ້ທໍ້ ຜູ້ບໍລິຫານປະຕິບັດຢູ່ໃນລະດັບຫຼາຍທີ່ສຸດ ກ່ວາໝູ່ແມ່ນບໍ່ຮູ້ສຶກວ່າໄດ້ແຂ່ງຂັນກັບຜູ້ ໃດ. ສ່ວນດ້ານຊ້າງສະພາບແວດລ້ອມຜູ້ບໍລິຫານ ແລະຄູອາຈານປະຕິບັດຢູ່ໃນລະດັບທີ່ສຸດຫລາຍກວ່າໝູ່ແມ່ນ ໄດ້ມີການແຂ່ງ ຂັນກັບໝູ່ ຄວາມຮູ້ສຶກຂອງນັກສຶກສາດ້ານການຮຽນດີຮຽນເກັ່ງ ນັກສຶກສາປະຕິບັດຢູ່ໃນລະດັບຫຼາຍ ທີ່ສຸດກ່ວາໝູ່ ແມ່ນຮູ້ສຶກວ່າໄດ້ມີການແຂ່ງຂັນກັບໝູ່, ສ່ວນດ້ານການປະກົດການຫຍໍ້ທໍ້ ແລະ ດ້ານ ການສະພາບແວດລ້ອມນັກສຶກສາປະຕິບັດຢູ່ໃນລະດັບຫຼາຍທີ່ສຸດກ່ວາໝູ່ ແມ່ນບໍ່ມີຄວາມຮູ້ສຶກວ່າຕົນ ເອງແຂ່ງຂັນແຕ່ຢ່າງໃດ

ອະນຸສອນ ໄຊວັນດີ (2016, ໜ້າ. ບົດຄັດຫຍໍ້) ໄດ້ຄົ້ນຄວ້າການຈັດການດ້ານສະພາບແວດ ລ້ອມທີ່ດີຕາມ 3 ຂໍ້ແຂ່ງຂັນຂອງໂຮງຮຽນມັດທະຍົມສຶກສາສົມບູນ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ. ຜົນການຄົ້ນຄວ້າພົບວ່າ: ລະດັບຄວາມຄິດເຫັນກ່ຽວກັບການຈັດການສະພາບແວດລ້ອມທີ່ດີຕາມ 3 ຂໍ້ແຂ່ງຂັນຂອງ ໂຮງຮຽນ ມັດທະຍົມສຶກສາສົມບູນ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ໂດຍລວມ ຢູ່ໃນລະດັບ ຫຼາຍເພື່ອພິດຈາ ລະນາເປັນແຕ່ລະດ້ານເຫັນວ່າ ດ້ານທີ່ມີຄ່າສະເລ່ຍສູງສຸດຄືດ້ານໂຮງຮຽນມີຄວາມ ສວຍງາມ, ຮອງລົງມາ ແມ່ນດ້ານໂຮງຮຽນມີຄວາມສະອາດ, ຈາກນັ້ນແມ່ນດ້ານການອໍານວຍຄວາມສະດວກໃຫ້ແກ່ການຮຽນການສອນ, ຜົນການປຽບທຽບລະດັບຄວາມຄິດເຫັນຂອງຜູ້ບໍລິຫານສະຖານສຶກສາ ແລະ ຄູສອນໂດຍຈໍາແນກຕາມ ໜ້າທີ່ຮັບຜິດຊອບ, ປະສົບການເຮັດວຽກ, ຂະໜາດຂອງໂຮງຮຽນທີ່ແຕກຕ່າງກັນທີ່ມີຕໍ່ ການຈັດຕັ້ງ ສະ

ພາບແວດລ້ອມທີ່ດີຕາມ 3 ຂໍ້ແຂ່ງຂັນຂອງໂຮງຮຽນມັດທະຍົມສຶກສາສົມບູນ ເມືອງ ຫາດຊາຍຟອງ ນະຄອນ ຫຼວງວຽງຈັນ ໂດຍລວມ ແລະ ໃນແຕ່ລະດ້ານເຫັນວ່າມີຄວາມແຕກຕ່າງກັນຢ່າງມີຄວາມສໍາຄັນ ທາງດ້ານ ທີ່ຕິທີ່ລະດັບ 0.05, ແນວທາງໃນການປັບປຸງ ແລະ ພັດທະນາການຈັດການດ້ານສະພາບແວດລ້ອມທີ່ດີ 3 ຂໍ້ ແຂ່ງຂັນຂອງ ໂຮງຮຽນມັດທະຍົມສົມບູນ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ຄື: ຜູ້ບໍລິຫານ ສະຖານບັນສຶກສາ ໃຫ້ຄວາມສໍາຄັນກ່ຽວກັບຄວາມພຽງພໍຂອງຄອມພິວເຕີ ແລະ ຫ້ອງຮຽນຄອມພິວເຕີ, ໂຮງຮຽນຄວນມີ ຫ້ອງພະຍາບານຂັ້ນພື້ນຖານເພື່ອໃສ່ໃນການເກີດເຫດສຸກເສີນໃນໂຮງຮຽນ, ຄວາມນີ້ການຈັດລະບົບການ ຮັກສາຄວາມສະອາດຂອງແຕ່ລະຫ້ອງຮຽນ ແລະ ຄວນມີການຍ້ອງຍໍຊົມເຊີຍໃນ ການຮັກສາຄວາມສະອາດຂອງແຕ່ລະຫ້ອງຮຽນຄວນມີສ່ວນຊີ່ວະພາຍໃນໂຮງຮຽນເພື່ອພັດທະນາ ແລະ ປູກຈິດສໍານຶກໃຫ້ນັກຮຽນມີຄວາມກະຕືລືລົ້ນໃນການຮັກສາຄວາມສະອາດ, ອົບຮົມແນວຄິດ ນັກຮຽນໃຫ້ມີການສ້າງກິດຈະກໍາຮັກສາສິ່ງ ແວດລ້ອມ ແລະການອອກແຮງງານ.

ອາລຸນໂນ ສີຫາວົງ (2016, ໜ້າ. ບົດຄັດຫຍໍ້) ໄດ້ຄົ້ນຄວ້າການປະຕິບັດດ້ານການສອນຮຽນ ເກັ່ງ ໃນຂໍ້ແຂ່ງຂັນຂອງກະຊວງສຶກສາທິການ ແລະກິລາ ໂຮງຮຽນມັດທະຍົມສຶກສາຕອນປາຍນະຄອນຫຼວງວຽງຈັນ ຜົນການຄົ້ນ ຄວ້າພົບວ່າ: ຄູອາຈານ ແລະນັກຮຽນມີຄວາມຄິດເຫັນກ່ຽວກັບ “ສະພາບ” ການປະຕິບັດດານສອນດີ ຮຽນເກັ່ງ ໃນ 3 ຂໍ້ແຂ່ງຂັນຂອງກະຊວງສຶກສາທິການ ແລະ ກິລາ ຂອງໂຮງຮຽນມັດທະຍົມສຶກສາ ຕອນປາຍ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ໂດຍສະພາບລວມຢູ່ລະດັບຫລາຍ, ຄູອາຈານ ແລະ ນັກຮຽນມີຄວາມຄິດເຫັນກ່ຽວກັບບັນຫາ ການປະຕິບັດດ້ານສອນດີຮຽນ ເກັ່ງໂດຍສະພາບລວມໃນ 3 ຂໍ້ແຂ່ງຂັນກະຊວງສຶກສາທິການ ແລະ ກິລາ ຂອງໂຮງຮຽນມັດທະຍົມ ສຶກສາຕອນປາຍ ໃນນະຄອນຫຼວງວຽງຈັນຢູ່ໃນລະດັບໜ້ອຍ, ປຽບທຽບສະພາບການປະຕິບັດ, ຈໍາແນກຕາມເພດ, ວຸດທິການສຶກສາ ໂດຍລວມມີຄວາມຄິດເຫັນກ່ຽວກັບສະພາບການ ປະຕິບັດບໍ່ແຕກຕ່າງກັນຢ່າງມີຄວາມສໍາຄັນທາງສະຖິຕິທີ່ 0.5, ຈໍາແນກຕາມປະກົດການເຮັດວຽກ ແລະ ທີ່ຕັ້ງໂຮງຮຽນຕ່າງກັນ ໂດຍລວມແມ່ຄວາມ ຄິດເຫັນກ່ຽວກັບ ສະພາບການປະຕິບັດມີຄວາມແຕກຕ່າງກັນຢ່າງມີຄວາມສໍາຄັນທາງສະຖິຕິ 0.5, ປຽບທຽບບັນຫາປະຕິບັດ ຈໍາແນກຕາມເພດ, ວຸດທິການສຶກສາ ແລະ ປະສົບການເຮັດວຽກຕ່າງກັນ ໂດຍລວມຄູອາຈານແລະ ນັກຮຽນ ມີຄວາມຄິດເຫັນກ່ຽວກັບບັນຫາປະຕິບັດບໍ່ແຕກຕ່າງກັນຢ່າງມີຄວາມຄັນ ທາງ ສະຖິຕິ 0.5, ຈໍາແນກຕາມທີ່ມີທີ່ຕັ້ງຕ່າງກັນ ໂດຍລວມ ແລະ ແຕ່ລະດ້ານມີຄວາມຄິດເຫັນກ່ຽວກັບການ ປະຕິບັດຄວາມແຕກຕ່າງຢ່າງມີຄວາມສໍາຄັນທາງສະຖິຕິ 0.5.

ນາລີ ວານທໍາມະສິດາ (2015, ໜ້າ. ບົດຄັດຫຍໍ້) ສຶກສາຄວາມເພິ່ງພໍໃຈຂອງຄູຕໍ່ເນື່ອງໃນ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາແລະກິລາຢູ່ໂຮງຮຽນມັດທະຍົມສຶກສາຕອນຕົ້ນຕົວເມືອງນາຊາຍ ທອງນະຄອນຫຼວງວຽງຈັນ ຜົນການສຶກສາພົບວ່າ: ຄວາມຄິດເຫັນຂອງຄູສອນຕໍ່ເນື່ອງໃນ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາຢູ່ໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ໃນ 3 ໂດຍພາບລວມ ແມ່ນຢູ່ໃນລະດັບດີຫຼາຍ.ຈໍາແນກຄວາມຄິດເຫັນຕາມວຸດທິການສຶກສາໂດຍປຽບທຽບທັງ 2 ດ້ານ ໂດຍລວມແລ້ວເຮັດວ່າຄູທີ່ມີວຸດທິຕ່າງກັນໃຫ້ຄວາມຄິດເຫັນວ່າ ຄູສອນທີ່ມີວຸດທິຕ່າງກັນໃຫ້ຄວາມຄິດເຫັນບໍ່ຕ່າງກັນ ແລະ ຄູສອນທີ່ມີປະສົບການຕ່າງກັນມີຄວາມຄິດ ເຫັນຕ່າງກັນຢ່າງມີຄວາມສໍາຄັນຖານສະຖິຕິທີ່ລະດັບ 0.05

ວິໄລທອງ ແສງມະນີ (2024) ສຶກສາກ່ຽວກັບການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາ ໃນໂຮງຮຽນມັດທະຍົມສຶກສາສົມບູນ ພາກລັດ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ໂດຍມີຈຸດປະສົງເພື່ອສຶກສາ 1) ສະພາບການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາ, 2) ສ້າງແນວທາງໃນການປັບປຸງການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາ ແລະ 3) ປະເມີນແນວທາງໃນການປັບປຸງການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາ ໃນໂຮງຮຽນມັດທະຍົມສຶກສາສົມບູນພາກລັດ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນໃນ 4 ດ້ານຄື:1) ດ້ານການສອນດີ, 2) ດ້ານການຮຽນເກັ່ງ, 3) ດ້ານການຕ້ານປະກົດການຫຍໍ້ທໍ້ ແລະ 4) ດ້ານການສ້າງສະພາບແວດລ້ອມທີ່ດີໃນໂຮງຮຽນ; ກຸ່ມເປົ້າໝາຍໄດ້ແກ່ ຜູ້ບໍລິຫານ ແລະ ຄູສອນ ໃນໂຮງຮຽນມັດທະຍົມສຶກສາສົມບູນ ພາກລັດ ເມືອງຈັນທະບູລີ ນະຄອນ ຫຼວງວຽງຈັນ ຈໍານວນ 217 ທ່ານ. ເຄື່ອງມືທີ່ໃຊ້ ເປັນແບບສອບຖາມ ມີ 3 ໄລຍະ ແລະ ສະຖິຕິທີ່ໃຊ້ ເປັນການຫາຄ່າຄວາມຖີ່ (Frequency), ຄ່າສ່ວນຮ້ອຍ (Percentage), ຄ່າສະເລ່ຍ ($\mu$) ແລະ ຄ່າຜັນປ່ຽນມາດຕະຖານ ($\sigma$). ຜົນການຄົ້ນຄວ້າພົບວ່າ: ການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາ ໂດຍລວມ ແລະ ແຕ່ລະດ້ານ ຢູ່ໃນລະດັບຫຼາຍ. ແນວທາງໃນການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາ, ດ້ານການສອນດີ: ຈັດຝຶກອົບຮົມການນໍາໃຊ້ຄູ່ມື, ແນະນໍາວິທີນໍາໃຊ້ຫຼັກສູດໃຫ້ແກ່ຄູ, ເນັ້ນການຮຽນ-ການສອນທິດສະດີຄຽງຄູ່ກັບການປະຕິບັດຕົວຈິງ, ເນັ້ນວິທີສອນໃຫ້ນັກຮຽນໄດ້ຄົ້ນຄິດ ແລະແກ້ໄຂບັນຫາດ້ວຍຕົນ ເອງ, ຄູເປັນຜູ້ໃຫ້ຄໍາແນະນໍາ ແລະ ແກ້ໄຂ; ດ້ານການຮຽນເກັ່ງ: ປະຕິບັດກິດຈະກໍາການຮຽນ ແລະ ຄົ້ນຄວ້າດ້ວຍຕົນເອງໃຫ້ຫຼາຍ, ສົນທະນາຖາມ-ຕອບຫຼາຍຂຶ້ນ, ມີຄວາມກະຕືລືລົ້ນຊອກຮູ້ຮໍ່າຮຽນດ້ວຍຕົນເອງ ດ້ວຍການຄົ້ນຄິດ, ວິເຄາະ ແລະຮູ້ຈັກແຍກບັນຫາ, ດ້ານການຕ້ານປະກົດການຫຍໍ້ທໍ້: ມີການໂຄສະນາເຜີຍແຜ່ຜົນຮ້າຍ, ຜົນເສຍຂອງສິ່ງເສບຕິດໃຫ້ທົ່ວເຖິງ ປີລະ 2-3 ຄັ້ງ, ສົມທົບກັບຄະນະພັດທະນາການສຶກສາຂັ້ນບ້ານ ຈັດກິດຈະກໍາທີ່ສົ່ງເສີມການຕ້ານສິ່ງເສບຕິດ, ສຶກສາອົບຮົມ ແລະກ່າວເຕືອນນັກຮຽນທີ່ພົວພັນສິ່ງເສບຕິດ ແລະ ຫາວິທີແກ້ໄຂທີ່ເໝາະສົມ, ລົງຕິດຕາມເດັກມັກຂາດ ຮຽນ, ຂາດເຂີນອຸປະກອນ, ຄອບຄົວຍາກຈົນ ເພື່ອສະກັດກັ້ນການປະລະການຮຽນ, ດ້ານການ

ສ້າງສະພາບແວດລ້ອມທີ່ດີໃນໂຮງຮຽນ ສົມທົບກັບອໍານາດການປົກຄອງທ້ອງຖິ່ນ ແລະ ສັງຄົມ ລະດົມຂົນຂວາຍຫາແຫຼ່ງທຶນເພື່ອຕອບສະໜອງສິ່ງອໍານວຍຄວາມສະດວກແກ່ການຮຽນ-ການສອນ, ປັບປຸງບູລະນະອາຄານສະຖານທີ່, ສົມທົບກັບຜູ້ປະກອບການຈັດສັນສະຖານບັນເທີງ ແລະ ຮ້ານກິນດື່ມທີ່ເປັນຜົນກະທົບຕໍ່ການຮຽນຮູ້ຂອງຜູ້ຮຽນ. ຜົນການປະເມີນແນວທາງການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາ ພົບວ່າມາດຕະຖານຄວາມເປັນປະໂຫຍດ, ຄວາມເປັນໄປໄດ້, ຄວາມເໝາະສົມ ແລະ ຄວາມສອດຄ່ອງ ໂດຍລວມ ຢູ່ໃນລະດັບຫຼາຍທີ່ສຸດ

ທັດສະນີ ວິລາຄໍາ (2554) ພົບວ່າສຶກສາການຈັດສະພາບແວດລ້ອມທີ່ເອື້ອຕໍ່ການ ຮຽນຮູ້ຂອງໂຮງຮຽນວັດຈັນປະດິດຖາລາມ ສັງກັດສໍານັກງານເຂດພາສີຈະເລີນ ກຸງເທບມະຫານະຄອນ ໂດຍຈຸດປະສົງເພື່ອສຶກສາ ແລະ ປຽບທຽບການສຶກສາການຈັດສະພາບແວດລ້ອມ ໃນ 3 ດ້ານຜົນ ຂອງການສຶກສາພົບວ່າ: ການຈັດສະພາບແວດລ້ອມທີ່ເອື້ອຕໍ່ການຮຽນຮູ້ຂອງໂຮງຮຽນວັດຈັນປະດິດຖາ ລາມຕາມຄວາມຄິດເຫັນຂອງຄູ ໂດຍລວມ ແລະ ສະເພາະດ້ານທັງ 3 ດ້ານ ມີການປະຕິບັດຢູ່ໃນ ລະດັບຫຼາຍ, ການສຶກສາການຈັດສະພາບແວດລ້ອມທີ່ເອື້ອຕໍ່ການຮຽນຮູ້ຂໍ້ຮຽນວັດຈັນ ປະດິດຖາລາມ ຕາມຄວາມຄິດຂອງນັກຮຽນ ໂດຍລວມ ແລະ ສະເພາະດ້ານທັງ 3 ດ້ານ ມີການປະຕິບັດຢູ່ໃນລະດັບລາຍການປຽບທຽບ ການຈັດສະພາບແວດລ້ອມທີ່ເອື້ອຕໍ່ການຮຽນຮູ້ຂອງໂຮງຮຽນວັດຈັນປະດິດຖາລາມ ສັງກັດສໍານັກງານເຂດພາສີຈະເລີນ ກຸງເທບມະຫານະຄອນ ຕາມຄວາມຄິດເຫັນຂອງຄູ ເມື່ອຈໍາແນກ ຕາມລະດັບຊັ້ນທີ່ສອນ ແລະ ປະສົບການສອນ ພົບວ່າ ມີຄວາມແຕກຕ່າງຢ່າງມີໃນສໍາຄັນທາງສະຖິຕິ ທີ່ລະດັບ 0.01. ຜົນປຽບທຽບການຈັດສະພາບແວດລ້ອມທີ່ເອື້ອຕໍ່ການຮຽນຮູ້ຂອງໂຮງຮຽນວັດຈັນປະດິດ ຖາລາມ ຕາມຄວາມຄິດເຫັນຂອງນັກຮຽນ ຈໍາແນກຕາມເພດຂອງນັກຮຽນພົບວ່າ ມີຄວາມແຕກຕ່າງ ຢ່າງມີໃນສໍາຄັນທາງສະຖິຕິ ທີ່ລະດັບ 0.01

ໂກວິດ ມັດສະນີມາ (2550, ໜ້າ. ບົດຄັດຫຍໍ້) ສຶກສາການຈັດສະພາບແວດລ້ອມຂອງສະຖານ ສຶກສາ ສັງກັດສໍານັກງານເຂດ ພື້ນທີ່ການສຶກສາກາລະສິນ ເຂດ 2ຈໍາແນກຕາມສະຖານະພາບ ແລະ ຂະໜາດສະຖານສຶກສາ ໂດຍລວມ ແລະ ສະເພາະດ້ານກຸ່ມຕົວຢ່າງໄດ້ມາຈາກການສຸ່ມແບບແບ່ງຊັ້ນ ໂດຍຈໍາແນກຕາມສະຖານະພາບ ແລະ ຂະໜາດຂອງສະຖານສຶກສາ ຈໍານວນ 454 ຄົນ ຜົນຈັກການ ສຶກສາພົບວ່າ: ສະພາບແວດລ້ອມ ຂອງສະຖານສຶກສາ ສັງກັດສໍານັກງານເຂດພື້ນທີ່ການສຶກສາກາລະ ສິນ ເຂດ 2ໂດຍລວມ ແລະ ໂດຍສະ ເພາະດ້ານຢູ່ໃນລະດັບຫຼາຍເມື່ອພິຈາລະນາຕາມສະຖານະພາບ ພົບວ່າ: ທັງຜູ້ບໍລິຫານ ແລະ ຄູມີຄວາມຄິດເຫັນຕໍ່ການຈັດສະພາບແວດລ້ອມຂອງສະຖານສຶກສາ ສັງກັດສໍານັກງານເຂດພື້ນທີ່ການສຶກສາກາລະສິນ ເຂດ2ທັງໂດຍລວມ ແລະ ສະເພາະດ້ານ ຢູ່ໃນ ລະດັບຫຼາຍ ຜູ້ບໍລິຫານ ແລະ ຄູ ມີຄວາມຄິດຕໍ່ກັບການຈັດສະພາບແວດລ້ອມຂອງສະຖານສຶກສາ ໂດຍລວມບໍ່ແຕກຕ່າງກັນ ສະຖານສຶກສາຂະໜາດນ້ອຍ ແລະ ໃຫຍ່ການຈັດສະພາບແວດລ້ອມຂອງ ສະຖານສຶກສາໂດຍລວມ ແລະສະເພາະດ້ານ ທຸກດ້ານແຕກຕ່າງກັນຢ່າງມີຄວາມສໍາຄັນທາງສະຖິຕິ 0.01 ສະນັ້ນຜູ້ຄົ້ນຄວ້າໄດ້ວ່າການປະຕິບັດຂອງຄູ ແລະ ນັກຮຽນແມ່ນມີຄວາມສໍາຄັນຫຼາຍໃນ ການຈັດຕັ້ງປະຕິບັດໃນວຽກງານຕ່າງໆ ພາຍໃນໂຮງຮຽນຄູຈະເປັນຜູ້ສີດໍາແນວທາງທີ່ຖືກຕ້ອງ ແລະ ນໍາພານັກຮຽນປະຕິບັດວຽກງານກິດຈະກໍາຕ່າງໆ ທີ່ໂຮງຮຽນຈັດຂຶ້ນມາໃຫ້ປະສົບຜົນສໍາເລັດ.

## 3. ວິທີດໍາເນີນການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ເປັນການຄົ້ນຄວ້າແບບສໍາຫຼວດຄວາມຄິດເຫັນ ແລະ ລັກສະນະຂອງຂໍ້ມູນເປັນແບບປະສົມປະສານລະຫວ່າງປະລິມານ ແລະ ຄຸນນະພາບ ຈາກກຸ່ມເປົ້າໝາຍທີ່ ເປັນຜູ້ບໍລິຫານ ແລະ ຄູສອນ ເຊິ່ງການດໍາເນີນຕາມ 3 ໄລຍະດັ່ງນີ້:

**ໄລຍະທີ 1:** ສຶກສາສະພາບການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາ

**ໄລຍະທີ 2:** ສຶກສາແນວທາງ ການປະຕິບັດ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ

**ໄລຍະທີ 3:** ຂໍ້ສະເໜີແນະແນວທາງ ການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາ.ໂຮງຮຽນລ້ຽງເດັກ-ອະນຸບານ-ປະຖົມສົມບູນພາກເອກະຊົນ ເມືອງໄຊເສດຖາ, ນະຄອນຫຼວງວຽງ

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

*3.1.1 ກຸ່ມເປົ້າໝາຍໄລຍະທີ 1*

ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ແມ່ນຜູ້ບໍລິຫານ ແລະ ຄູສອນ ໃນ ໂຮງຮຽນ ລ້ຽງເດັກ-ອະນຸບານ-ປະຖົມສົມບູນພາກເອກະຊົນ ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນຈໍານວນ 216 ທ່ານ ໃນນັ້ນ ມີຜູ້ບໍລິຫານ 13 ທ່ານ ແລະ ຄູສອນ 203 ທ່ານ ໂດຍກຸ່ມຜູ້ຄົ້ນຄວ້າໃຊ້ວິທີການ ເລືອກ ແບບເຈາະຈົງ

*3.1.2 ກຸ່ມເປົ້າໝາຍໃນການສໍາພາດໄລຍະທີ 2*

ກຸ່ມເປົ້າໝາຍໃນການສໍາພາດແມ່ນ ຄະນະຜູ້ບໍລິຫານ ແລະຜູ້ຊ່ຽວຊານ ຫຼື ຜູ້ທີ່ມີປະສົບການກ່ຽວກັບການສຶກສາ ແລະ ການຈັດຕັ້ງປະຕິບັດນະໂຍບາຍ ຢູ່ໃນໂຮງຮຽນ ລ້ຽງເດັກ-ອະນຸບານ-ປະຖົມສົມພາກບູນເອກະຊົນ ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ນໍາເຄື່ອງມືແບບສໍາພາດກ່ຽວກັບແນວທາງໄປສໍາພາດກັບຜູ້ອໍານວຍການໂຮງຮຽນ 13 ທ່ານ ແລະ ຫົວໜ້າ ແລະ ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ເມືອງໄຊເສດຖາ 3 ທ່ານ ລວມ 16 ທ່ານ.

*3.1.3 ກຸ່ມເປົ້າໝາຍໃນການເກັບຂໍ້ມູນໄລຍະທີ 3*

ກຸ່ມເປົ້າໝາຍທີ່ໃຊ້ເຂົ້າໃນຂໍ້ສະເໜີແນະແນວທາງໃນການປະຕິບັດ 3 ຂໍ້ແຂ່ງຂັນຂະແໜງການ ສຶກສາແລະກິລາ ຢູ່ໃນໂຮງຮຽນ ລ້ຽງເດັກ-ອະນຸບານ-ປະຖົມສົມບູນພາກເອກະຊົນ ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ປະກອບມີ ຜູ້ຊົງຄຸນວຸດທິ ລວມທັງໝົດ 6

ທ່ານ ( 3ທ່ານຫ້ອງການສຶກສາ ແລະ ກິລາ ເມືອງໄຊເສດຖາ, 3 ທ່ານພະແນກສຶກສາທິການ ແລະ ກິລາ.

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ການຄົ້ນຄວ້າໃນຄັ້ງນີ້ ຜູ້ຄົ້ນຄວ້າໄດ້ກຳນົດເຄື່ອງມືໃນການເກັບກຳຂໍ້ມູນ ຈຳແນກອອກເປັນ 3 ໄລຍະ ດັ່ງນີ້:

*3.2.1 ເຄື່ອງມືທີ່ໃຊ້ໃນໄລຍະທີ 1*

ແມ່ນ ແບບສອບຖາມ ທີ່ຜູ້ຄົ້ນຄວ້າສ້າງຂຶ້ນ ໂດຍອີງໃສ່ເນື້ອໃນ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ ເພື່ອສອບຖາມກ່ຽວກັບສະພາບ ແລະ ສາເຫດການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາ ໃນໂຮງຮຽນລ້ຽງເດັກ–ອະນຸບານ–ປະຖົມສົມບູນພາກເອກະຊົນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ

ແບບສອບຖາມແບ່ງອອກເປັນ 3 ຕອນ ປະກອບດ້ວຍ:

- ຕອນທີ 1 ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ
- ຕອນທີ 2 ຂໍ້ຄຳຖາມກ່ຽວກັບສະພາບການປະຕິບັດ 3 ຂໍ້ແຂ່ງຂັນ (ເປັນມາດຕາສ່ວນປະເມີນຄ່າ)
- ຕອນທີ 3 ຄຳຖາມປາຍເປີດເພື່ອສອບຖາມຄວາມຄິດເຫັນ ແລະ ຂໍ້ສະເໜີແນະເພີ່ມເຕີມ

*3.2.2 ເຄື່ອງມືໃນໄລຍະທີ 2*

ແມ່ນ ແນວທາງການປະຕິບັດ 3 ຂໍ້ແຂ່ງຂັນ ທີ່ຜູ້ຄົ້ນຄວ້າພັດທະນາຂຶ້ນ ໂດຍອີງໃສ່ຜົນການວິເຄາະຂໍ້ມູນຈາກໄລຍະທີ 1ໂດຍສະເພາະ ໄດ້ນຳເອົາຂໍ້ຄຳຖາມການປະຕິບັດທີ່ມີຄ່າສະເລ່ຍຕ່ຳກວ່າຄ່າສະເລ່ຍລວມໃນແຕ່ລະດ້ານ ແລະ ຂໍ້ຄິດເຫັນ ແລະ ຂໍ້ສະເໜີແນະຈາກຄຳຖາມປາຍເປີດມາສັງເຄາະ ແລະ ຮຽບຮຽງເປັນຮ່າງແນວທາງການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາ ໃນໂຮງຮຽນລ້ຽງເດັກ–ອະນຸບານ–ປະຖົມສົມບູນພາກເອກະຊົນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ.

*3.2.3 ເຄື່ອງມືໃນໄລຍະທີ 3*

ແມ່ນແບບສອບຖາມປະເມີນແນວທາງ ທີ່ພັດທະນາຈາກຮ່າງຂໍ້ສະເໜີແນະແນວທາງການປະຕິບັດ 3 ຂໍ້ແຂ່ງຂັນໂດຍນຳໄປສອບຖາມຄວາມຄິດເຫັນຂອງກຸ່ມເປົ້າໝາຍ (ຄູ ແລະ ຜູ້ບໍລິຫານ) ກ່ຽວກັບມາດຖານຄວາມເປັນໄປໄດ້ ແລະມາດຖານຄວາມເໝາະສົມ ແບບສອບຖາມໃນໄລຍະນີ້ແບ່ງອອກເປັນ 2 ຕອນ ຄື:ຕອນທີ 1 ການປະເມີນຄວາມເປັນໄປໄດ້ຂອງແນວທາງ ແລະ ຕອນທີ 2 ການປະເມີນຄວາມເໝາະສົມຂອງແນວທາງຂໍ້ມູນທີ່ໄດ້ຈາກໄລຍະທີ 3 ນຳໄປວິເຄາະເພື່ອປັບປຸງ ແລະ ຢືນຢັນຄຸນນະພາບຂອງແນວທາງການປະຕິບັດ ໃຫ້ມີຄວາມເໝາະສົມ ແລະ ສາມາດນຳໄປນຳໃຊ້ໃນທາງປະຕິບັດໄດ້

*3.3 ວິທີເກັບກຳຂໍ້ມູນ*

ການເກັບລວບລວມຂໍ້ມູນໃນການຄົ້ນຄວ້າຄັ້ງນີ້ ຜູ້ຄົ້ນຄວ້າໄດ້ດຳເນີນການຕາມຂັ້ນຕອນ ໂດຍແບ່ງອອກເປັນ 3 ໄລຍະ ດັ່ງນີ້:

*ການທົດລອງເຄື່ອງມື (Pre-test)*

ກ່ອນການເກັບຂໍ້ມູນຕົວຈິງ, ຜູ້ຄົ້ນຄວ້າໄດ້ນຳເອົາແບບສອບຖາມໄປທົດລອງໃຊ້ (Try out) ກັບຄູສອນ ແລະ ຜູ້ບໍລິຫານ ຢູ່ໂຮງຮຽນປະຖົມສົມບູນວຽງສະຫວັນ ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ ຈຳນວນ 30 ທ່ານ ໃນລະຫວ່າງວັນທີ **3/10/2025 ຫາ 5/10/2025** ເພື່ອຫາຄ່າຄວາມເຊື່ອໝັ້ນຂອງເຄື່ອງມື.

*ໄລຍະທີ 1: ສຶກສາສະພາບການປະຕິບັດ 3 ຂໍ້ແຂ່ງຂັນ*

ຜູ້ຄົ້ນຄວ້າຂໍໜັງສືພິວພັນວຽກຈາກ ຄະນະບໍດີ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ເພື່ອສະເໜີຕໍ່ຜູ້ບໍລິຫານໂຮງຮຽນລ້ຽງເດັກ-ອະນຸບານ-ປະຖົມສົມບູນພາກເອກະຊົນ ເມືອງໄຊເສດຖາ ທັງ 13 ແຫ່ງ.

- ຜູ້ຄົ້ນຄວ້າໄດ້ລົງເກັບກຳຂໍ້ມູນຕົວຈິງຈາກກຸ່ມເປົ້າໝາຍ ເຊິ່ງປະກອບມີ ຄູສອນ ແລະ ຜູ້ບໍລິຫານ ລວມທັງໝົດ **216 ທ່ານ** ໃນລະຫວ່າງວັນທີ **7/10/2025 ຫາ 18/10/2025**.
- ນຳເອົາແບບສອບຖາມທີ່ເກັບຄືນມາໄດ້ມາກວດສອບຄວາມຖືກຕ້ອງ ແລະ ຄວາມສົມບູນ ກ່ອນນຳໄປວິເຄາະຂໍ້ມູນດ້ວຍວິທີການທາງສະຖິຕິ.

*ໄລຍະທີ 2: ສຶກສາແນວທາງການປະຕິບັດ 3 ຂໍ້ແຂ່ງຂັນ*

- ຜູ້ຄົ້ນຄວ້ານຳສົ່ງໜັງສືສະເໜີເພື່ອຂໍນັດໝາຍສົນທະນາກຸ່ມ ແລະ ສຳພາດກັບກຸ່ມເປົ້າໝາຍ ຈຳນວນ **16 ທ່ານ** (ປະກອບມີ ຜູ້ອຳນວຍການໂຮງຮຽນ 13 ທ່ານ ແລະ ວິຊາການຈາກຫ້ອງການສຶກສາທິການ ແລະ ກິລາເມືອງ 3 ທ່ານ).
- ດຳເນີນການເກັບຂໍ້ມູນໃນລະຫວ່າງວັນທີ **7/11/2025 ຫາ 10/11/2025** ໂດຍຜູ້ຄົ້ນຄວ້າເປັນຜູ້ດຳເນີນການສົນທະນາ ແລະ ບັນທຶກຂໍ້ມູນດ້ວຍຕົນເອງ.

*ໄລຍະທີ 3: ຂໍ້ສະເໜີແນະແນວທາງການປະຕິບັດ*

- ຜູ້ຄົ້ນຄວ້າໄດ້ນຳເອົາຮ່າງແນວທາງໄປຂໍຄວາມຄິດເຫັນ ແລະ ປະເມີນຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຈາກຜູ້ຊົງຄຸນວຸດທິ ຈຳນວນ **6 ທ່ານ** (ປະກອບມີ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ 3 ທ່ານ ແລະ ວິຊາການຈາກພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ 3 ທ່ານ).
- ດຳເນີນການເກັບຂໍ້ມູນໃນລະຫວ່າງວັນທີ **10/11/2025 ຫາ 17/11/2025** ໂດຍການອະທິບາຍຈຸດປະສົງ ແລະ ຮູບແບບການປະເມີນໃຫ້ກຸ່ມເປົ້າໝາຍເຂົ້າໃຈກ່ອນການຕອບແບບສອບຖາມ.
- ຮວບຮວມຂໍ້ມູນທັງໝົດເພື່ອນຳໄປວິເຄາະ ແລະ ສະຫຼຸບຜົນການຄົ້ນຄວ້າ..

*3.4 ການວິເຄາະຂໍ້ມູນ*

*3.4.1 ການວິເຄາະຂໍ້ມູນໄລຍະທີ 1*

**ຕອນທີ 1:** ວິເຄາະຂໍ້ມູນກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມໂດຍການຄຳນວນຫາ ຄ່າ ສ່ວນຮ້ອຍ (P)

ສູດຊອກຫາຄ່າສ່ວນຮ້ອຍ (ບຸນຊົມ ສີສະອາດ, 2535, ໜ້າ. 101,102,103)

$$P = \frac{f}{n} \times 100$$

P ແມ່ນສ່ວນຮ້ອຍຂອງຜົນໄດ້ຮັບຄິດເປັນເປີເຊັນ (%)
f ແມ່ນຈຳນວນຄົນທີ່ຕ້ອງການຊອກຫາເປີເຊັນ
n ແມ່ນຈຳນວນຄົນທັງໝົດໃນກຸ່ມຕົວຢ່າງ

**ຕອນທີ 2**: ວິເຄາະຂໍ້ມູນກ່ຽວກັບ ສາເຫດ ໂດຍຫາຄ່າສະເລ່ຍ $(\mu)$ ແລະ ຄ່າຜັນປ່ຽນມາດຕະຖານ $(\sigma)$ ໂດຍມີເກນແປຄວາມຫມາຍ 5 ລະດັບ

ສູດຄ່າສະເລ່ຍ $(\mu)$

$$\mu = \frac{\sum X}{N}$$

- $X$= ຄ່າຂໍ້ມູນແຕ່ລະຄ່າ
- $N$= ຈຳນວນຂໍ້ມູນທັງໝົດ

ສູດຄ່າຜັນປ່ຽນມາດຕະຖານ $(\sigma)$

$$\sigma = \sqrt{\frac{\sum (X-\mu)^2}{N}}$$

- $X$= ຄ່າຂໍ້ມູນແຕ່ລະຄ່າ
- $\mu$= ຄ່າສະເລ່ຍ
- $N$= ຈຳນວນຂໍ້ມູນ

**ຕອນທີ 3:** ສະຫຼຸບ ຣວບຣວມຂໍ້ມູນ, ສັງເຄາະຄວາມຄິດເຫັນເພີ່ມເຕີມກ່ຽວກັບ ແນວທາງການປະຕິບັດ 3 ຂໍ້ແຂ່ງຂັນຂະແໜງການ ສຶກສາແລະກິລາ ຢູ່ໃນໂຮງຮຽນ ລ້ຽງເດັກ-ອະນຸບານ-ປະຖົມສົມບູນເອກະຊົນເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ

*3.4.2 ວິທີການວິເຄາະຂໍ້ມູນໄລຍະທີ 2*

ເປັນການສະຫຼຸບ, ສັງເຄາະ, ສັງລວມຂໍ້ມູນທີ່ໄດ້ຈາກການສົນທະນາກຸ່ມ, ຈັດລຽງເນື້ອໃນ ເຊິ່ງຈະເປັນການຫາຄວາມແຕກຕ່າງ ແລະ ຄວາມຄືກັນຂອງເນື້ອໃນ ເພື່ອນຳໄປສ້າງເປັນແນວທາງແກ້ໄຂບັນຫາການປະຕິບັດ 3 ຂໍ້ແຂ່ງຂັນຂະແໜງການສຶກສາແລະກິລາ ຢູ່ໃນໂຮງຮຽນ ລ້ຽງເດັກ-ອະນຸບານ-ປະຖົມສົມບູນພາກເອກະຊົນ ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ແລ້ວນຳໄປປະເມີນຕໍ່ໄປ.

*3.4.3 ວິທີການວິເຄາະຂໍ້ມູນໄລຍະທີ 3*

**ຕອນທີ 1:** ວິເຄາະຂໍ້ມູນກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມໂດຍການຄຳນວນຫາຄ່າຄວາມຖີ່ (F) ແລະ ຄ່າສ່ວນຮ້ອຍ (P).

**ຕອນທີ 2:** ວິເຄາະຂໍ້ມູນ ແລະ ແປຜົນກ່ຽວກັບຂໍ້ສະເໜີແນະແນວທາງແກ້ໄຂບັນຫາບັນຫາຄູສອນບໍ່ພຽງພໍໃນໂຮງຮຽນລ້ຽງເດັກ-ອະນຸບານ-ປະຖົມສົມບູນພາກເອກະຊົນ ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນໂດຍຫາຄ່າສະເລ່ຍ $(\mu)$ ແລະ ຄ່າຜັນປ່ຽນມາດຕະຖານ $(\sigma)$

## 4. ຜົນການຄົ້ນຄວ້າ

1. ສະພາບການປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາ ສັງລວມ 3 ດ້ານ ໄລຍະທີ 1ໂດຍລວມແມ່ນຢູ່ໃນລະດັບຫຼາຍ. ເມື່ອລຽງລຳດັບຄ່າສະເລ່ຍຈາກຫຼາຍຫາໜ້ອຍ ພົບວ່າ: ດ້ານທີ່ມີຄ່າສະເລ່ຍສູງສຸດອັນດັບ 1 ແມ່ນດ້ານການສ້າງສະພາບແວດລ້ອມທີ່ດີໃນໂຮງຮຽນຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນດ້ານການຕ້ານປະກົດການຫຍໍ້ທໍ້ຢູ່ໃນລະດັບຫຼາຍ ແລະ ດ້ານການສອນດີ - ດ້ານການຮຽນເກັ່ງ ດ້ານນີ້ມີຄ່າສະເລ່ຍຕໍ່າສຸດແຕ່ກໍຍັງຢູ່ໃນລະດັບຫຼາຍ. ນີ້ໝາຍຄວາມວ່າການພັດທະນາຄູ ແລະ ນັກຮຽນ ເຊັ່ນ ການສອນ, ການຮຽນ, ການພັດທະນາຫຼັກສູດ ອາດຈະເປັນດ້ານທີ່ຕ້ອງໄດ້ເອົາໃຈໃສ່ ແລະ ປັບປຸງຕື່ມອີກ ເພື່ອຍົກລະດັບໃຫ້ສູງຂຶ້ນທຽບເທົ່າກັບດ້ານອື່ນໆ.

ແນວທາງການປະຕິບັດ 3 ຂໍ້ແຂ່ງຂັນ ໄລຍະທີ 2 ແມ່ນສຸມໃສ່ການຍົກສູງຄຸນນະພາບການສຶກສາ, ການແກ້ໄຂບັນຫາສັງຄົມໃນໂຮງຮຽນ ແລະ ການປັບປຸງສະພາບແວດລ້ອມໃຫ້ດີຂຶ້ນ , ໂດຍມີຈຸດເນັ້ນດັ່ງນີ້:

*ດ້ານການສອນດີ – ຮຽນເກັ່ງ*

ການພັດທະນາຄູ: ຝຶກອົບຮົມຄູຢ່າງຕໍ່ເນື່ອງກ່ຽວກັບເຕັກນິກການສອນແບບໃໝ່ (Active Learning) ແລະ ການນຳໃຊ້ ເຕັກໂນໂລຊີ, ພ້ອມທັງມີການ ຕິດຕາມປະເມີນຜົນ ແລະ ແລກປ່ຽນບົດຮຽນ ລະຫວ່າງຄູ.

- ຕິດຕາມ ແລະ ສົ່ງເສີມຜູ້ຮຽນ: ສ້າງລະບົບ ຕິດຕາມການເຂົ້າຮຽນ ຢ່າງເຂັ້ມງວດ ແລະ ມີມາດຕະການໃຫ້ ລາງວັນ/ລົງໂທດທີ່ຊັດເຈນ (ເນັ້ນ ແຮງຈູງໃຈທາງບວກ).
- ປະສານງານກັບຜູ້ປົກຄອງ: ສ້າງ ຊ່ອງທາງການສື່ສານທີ່ເຂັ້ມແຂງ (ເຊັ່ນ: ແອັບສະເພາະ) ເພື່ອຕິດຕາມພຶດຕິກຳ ແລະ ຈັດ ກອງປະຊຸມຜູ້ປົກຄອງ ຢ່າງໜ້ອຍ 2 ຄັ້ງຕໍ່ປີ.

*ດ້ານປະກົດການຫຍໍ້ທໍ້*

-ຫຼັກສູດຕ້ານສິ່ງເສບຕິດ: ບັນຈຸເນື້ອໃນກ່ຽວກັບ ການປ້ອງກັນ ແລະ ຜົນກະທົບຂອງສິ່ງເສບຕິດ ເຂົ້າໃນກິດຈະກຳ, ເນັ້ນການສອນແບບ ມີສ່ວນຮ່ວມ ແລະ ເຊື້ອເຊີນ ຕຳຫຼວດ ຫຼື ແພດໝໍ ມາໃຫ້ຄວາມຮູ້ຕົວຈິງ.

-ກົນໄກຮ່ວມມືກັບຜູ້ປົກຄອງ: ສ້າງກົນໄກ ຮ່ວມມືທີ່ເຂັ້ມງວດ ເພື່ອແກ້ໄຂບັນຫາພຶດຕິກຳທາງລົບ ແລະ ຈັດ ຝຶກອົບຮົມຜູ້ປົກຄອງ ກ່ຽວກັບວິທີການຮັບມືກັບໄວລຸ້ນ.

-ຄະນະສະເພາະກິດ: ຈັດຕັ້ງ ຄະນະສະເພາະກິດແບບຄົບວົງຈອນ (ມີຄູ, ຜູ້ປົກຄອງ, ນັກຈິດຕະວິທະຍາ) ເພື່ອຕິດຕາມ ແລະ ແກ້ໄຂບັນຫາພາຍໃນໂຮງຮຽນໃຫ້ທັນການ.

-ໂຄງການໃຫ້ຄຳປຶກສາ: ຈັດຕັ້ງ ມຸມໃຫ້ຄຳປຶກສາ ຫຼື ໂຄງການສຸຂະພາບຈິດ ສຳລັບນັກຮຽນທີ່ມີຄວາມສ່ຽງ, ເພີ່ມຊົ່ວໂມງໃຫ້ຄຳປຶກສາ, ຮັບປະກັນຄວາມລັບ ແລະ ຝຶກອົບຮົມຄູໃຫ້ມີທັກສະເບື້ອງຕົ້ນ.

*ດ້ານການສ້າງສະພາບແວດລ້ອມທີ່ດີໃນໂຮງຮຽນ*

- ງົບປະມານສິ່ງອຳນວຍຄວາມສະດວກ ແລະ ຄວາມປອດໄພ: ຈັດສັນ ງົບປະມານຢ່າງພຽງພໍ ເພື່ອປັບປຸງ ແລະ ບຳລຸງຮັກສາ ໂຄງລ່າງພື້ນຖານ (ເດີ່ນຫຼີ້ນ, ຫ້ອງນ້ຳ), ພ້ອມທັງສ້າງ ແຜນງົບປະມານໄລຍະຍາວ ແລະ ກວດກາຄວາມປອດໄພເປັນປະຈຳ.

- ໂຄງການໂຮງຮຽນສີຂຽວ: ສ້າງ ໂຄງການໂຮງຮຽນສີຂຽວແບບຍືນຍົງ ທີ່ເຊື່ອມໂຍງກັບຫຼັກສູດ (ການຈັດການຂີ້ເຫຍື້ອ, ປະຢັດພະລັງງານ), ແລະ ເພີ່ມ ສວນຜັກ/ພື້ນທີ່ສີຂຽວ ທີ່ນັກຮຽນສາມາດປະຕິບັດຕົວຈິງໄດ້.

- ການຄຸ້ມຄອງຂີ້ເຫຍື້ອ: ສົ່ງເສີມການ ໄຈ້ແຍກຂີ້ເຫຍື້ອ ແລະ ການນຳກັບມາໃຊ້ໃໝ່ (Recycling) ໃຫ້ເປັນກິດຈະກຳປະຈຳ ແລະ ຮ່ວມມືກັບ ອົງການຈັດຕັ້ງພາຍນອກ ເພື່ອກຳຈັດຢ່າງຖືກຕ້ອງ.

-ສະພາບແວດລ້ອມທີ່ກະຕຸ້ນການຮຽນຮູ້: ປັບປຸງ ຫ້ອງຮຽນ, ຫ້ອງສະໝຸດ, ແລະ ມຸມອ່ານ ໃຫ້ດຶງດູດ, ມີສື່ການຮຽນຮູ້ທີ່ທັນສະໄໝ, ແລະ ສົ່ງເສີມການໃຊ້ ວັດສະດຸທ້ອງຖິ່ນ ຫຼື ຂີ້ເຫຍື້ອຣີໄຊເຄີນ ມາສ້າງເປັນສື່ການຮຽນ.

## 5. ອະພິປາຍຜົນ

ຈາກຜົນການຄົ້ນຄວ້າກ່ຽວກັບການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາ ຢູ່ໂຮງຮຽນເອກະຊົນ ເມືອງໄຊເສດຖາ, ສາມາດອະພິປາຍຜົນຕາມປະເດັນສຳຄັນໄດ້ດັ່ງນີ້:

*5. 1. ດ້ານການສ້າງສະພາບແວດລ້ອມທີ່ດີໃນໂຮງຮຽນ*

ຜົນການຄົ້ນຄວ້າ ພົບວ່າຢູ່ໃນລະດັບຫຼາຍທີ່ສຸດ ໂດຍສະເພາະຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນ ໂຮງຮຽນມີຄວາມສະອາດ, ສວຍງາມ ແລະ ມີຄວາມປອດໄພ ຜົນການຄົ້ນຄວ້ານີ້ ສອດຄ່ອງກັບແນວຄິດຂອງ ອິນພັນ ປະສິດທິຣັດ (2545) ທີ່ລະບຸວ່າສະພາບແວດລ້ອມທີ່ດີເປັນປັດໄຈເອື້ອອຳນວຍຕໍ່ການຮຽນ-ການສອນ ແລະ ສອດຄ່ອງກັບບົດວິໄຈຂອງ ພຸດທະສອນ ສີວິໄລ (2020) ທີ່ພົບວ່າໂຮງຮຽນເອກະຊົນສ່ວນໃຫຍ່ເນັ້ນການປັບປຸງພື້ນຖານໂຄງລ່າງເພື່ອສ້າງພາບລັກທີ່ດີຍ້ອນວ່າໂຮງຮຽນເອກະຊົນເປັນຫົວໜ່ວຍທຸລະກິດການສຶກສາທີ່ຕ້ອງມີການແຂ່ງຂັນ, ການລົງທຶນໃສ່ສະຖານທີ່ໃຫ້ມີຄວາມໂດດເດັ່ນ ແລະ ປອດໄພ ຈຶ່ງເປັນບຸລິມະສິດຫຼັກເພື່ອດຶງດູດ ແລະ ສ້າງຄວາມໝັ້ນໃຈໃຫ້ແກ່ຜູ້ປົກຄອງ.ທັດສະນະຂອງຜູ້ຄົ້ນຄວ້າ: ຜູ້ຄົ້ນຄວ້າເຫັນວ່າສະພາບແວດລ້ອມທີ່ດີ ຂອງໂຮງຮຽນເອກະຊົນ, ແຕ່ຄວນເອົາໃຈໃສ່ຄວາມຍືນຍົງຂອງອຸປະກອນຮັບໃຊ້ການຮຽນ-ການສອນພາຍໃນຫ້ອງຮຽນຕື່ມອີກ.

*5. 2. ດ້ານການສອນດີ - ການຮຽນເກັ່ງ*

ຜົນການຄົ້ນຄວ້າ ພົບວ່າຢູ່ໃນລະດັບຫຼາຍເຖິງວ່າຈະຢູ່ໃນລະດັບຫຼາຍ ແຕ່ຂໍ້ທີ່ມີຄ່າສະເລ່ຍຕ່ຳກວ່າໝູ່ແມ່ນ ຄວາມຕັ້ງໃຈຮຽນ ແລະ ການມາຮຽນຂອງຜູ້ຮຽນຜົນການຄົ້ນຄວ້າ ສອດຄ່ອງກັບແນວຄິດຂອງ ອາພອນ ໃຈທ່ຽງ (2553) ທີ່ເນັ້ນວ່າການຮຽນ-ການສອນທີ່ມີຄຸນນະພາບຕ້ອງເກີດຈາກຄວາມພ້ອມຂອງທັງຄູ ແລະ ນັກຮຽນ. ນອກນັ້ນຍັງສອດຄ່ອງກັບ ອັກສອນ (2019) ທີ່ກ່າວວ່າຫາກວິທີສອນບໍ່ມີຄວາມຫຼາກຫຼາຍ ອາດສົ່ງຜົນຕໍ່ຄວາມສົນໃຈຂອງຜູ້ຮຽນ.ສາເຫດ ອາດມາຈາກສະພາບແວດລ້ອມທາງສັງຄົມໃນປະຈຸບັນທີ່ມີສື່ສັງຄົມອອນລາຍດຶງດູດຄວາມສົນໃຈເດັກ, ປະກອບກັບການຂາດການຕິດຕາມທີ່ໃກ້ຊິດລະຫວ່າງໂຮງຮຽນ ແລະ ຄອບຄົວໃນບາງກໍລະນີທັດສະນະຂອງຜູ້ຄົ້ນຄວ້າເຫັນວ່າ ຄູສອນຄວນໄດ້ຮັບການຝຶກອົບຮົມດ້ານຈິດວິທະຍາການສອນ ແລະ ການໃຊ້ສື່ Active Learning ໃຫ້ຫຼາຍຂຶ້ນເພື່ອດຶງດູດນັກຮຽນ.

*5. 3. ດ້ານການຕ້ານປະກົດການຫຍໍ້ທໍ້*

ຜົນການຄົ້ນຄວ້າ ພົບວ່າຢູ່ໃນລະດັບຫຼາຍ. ຈຸດທີ່ໜ້າສົນໃຈແມ່ນການສຶກສາອົບຮົມກ່ຽວກັບໂທດຂອງສິ່ງເສບຕິດມີການປະຕິບັດທີ່ດີ.ຜົນການຄົ້ນຄວ້າ ສອດຄ່ອງ ກັບນະໂຍບາຍ 3 ຂໍ້ແຂ່ງຂັນຂອງກະຊວງສຶກສາທິການ ແລະ ກິລາ ແລະ ສອດຄ່ອງກັບບົດວິໄຈຂອງ ທອງດີ ພົມມະວົງ (2021) ທີ່ພົບວ່າການສ້າງກົນໄກປ້ອງກັນພາຍໃນໂຮງຮຽນສາມາດຫຼຸດຜ່ອນບັນຫາຢາເສບຕິດໄດ້. ສາເຫດຍ້ອນໂຮງຮຽນເອກະຊົນມີລະບຽບການຄຸ້ມຄອງທີ່ເຂັ້ມງວດ ແລະ ມີການກວດກາພາຍໃນຢ່າງຕໍ່ເນື່ອງ ເພາະຫາກເກີດປາກົດການຫຍໍ້ທໍ້ຈະສົ່ງຜົນກະທົບໂດຍກົງຕໍ່ຊື່ສຽງຂອງໂຮງຮຽນ ແລະ ທັດສະນະຂອງຜູ້ຄົ້ນຄວ້າ ເຫັນວ່າ ຄວນເພີ່ມທະວີການສ້າງເຄືອຂ່າຍ ໃຫ້ເຂັ້ມແຂງກວ່າເກົ່າ ເພື່ອເປັນຫູເປັນຕາຊ່ວຍກັນໃນຊ່ວງເວລານອກໂຮງຮຽນ.

## 7. ຂໍ້ສະເໜີແນະ

*7.1. ຂໍ້ສະເໜີແນະໃນການນຳຜົນການຄົ້ນຄວ້າໄປໃຊ້*

ດ້ານການສອນດີ-ຮຽນເກັ່ງ: ຜູ້ບໍລິຫານໂຮງຮຽນຄວນສົ່ງເສີມການຝຶກອົບຮົມຄູກ່ຽວກັບ ເຕັກນິກການສອນແບບໃໝ່ (Active Learning) ແລະ ການນຳໃຊ້ ເຕັກໂນໂລຊີ ຢ່າງຕໍ່ເນື່ອງ. ພ້ອມທັງສ້າງລະບົບການປະສານງານກັບຜູ້ປົກຄອງໃຫ້ເຂັ້ມແຂງຂຶ້ນເພື່ອຕິດຕາມການຮຽນຂອງນັກຮຽນ.

ດ້ານການສ້າງສະພາບແວດລ້ອມທີ່ດີ: ຄວນເອົາໃຈໃສ່ປັບປຸງວຽກງານ ການຄຸ້ມຄອງຂີ້ເຫຍື້ອ ແລະ ການໄຈ້ແຍກຂີ້ເຫຍື້ອໃຫ້ມີປະສິດທິຜົນສູງຂຶ້ນ. ພ້ອມທັງສົ່ງເສີມກິດຈະກຳ ການນຳເອົາຂີ້ເຫຍື້ອກັບມາໃຊ້ໃໝ່ໃຫ້ເປັນວຽກງານປະຈຳ.

ດ້ານຕ້ານປະກົດການຫຍໍ້ທໍ້: ຄວນຈັດກິດຈະກາເຜີຍແຜ່ກົດໝາຍ ແລະ ຄວາມຮູ້ກ່ຽວກັບສິ່ງເສບຕິດໃຫ້ເປັນປົກກະຕິ.

*7.2. ຂໍ້ສະເໜີແນະສຳລັບການຄົ້ນຄວ້າຕໍ່ໄປ*

ຄວນມີການສຶກສາເພື່ອປຽບທຽບການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນ ລະຫວ່າງ ໂຮງຮຽນເອກະຊົນ ແລະ ໂຮງຮຽນພາກລັດໃນເມືອງໄຊເສດຖາ.

ຄວນສຶກສາເຖິງ ປັດໄຈທີ່ສົ່ງຜົນກະທົບ ຕໍ່ການປະຕິບັດ 3 ຂໍ້ແຂ່ງຂັນ ໂດຍໃຊ້ເຄື່ອງມືການຄົ້ນຄວ້າແບບປະສົມ (ປະລິມານ ແລະ ຄຸນນະພາບ) ເພື່ອໃຫ້ໄດ້ຂໍ້ມູນທີ່ເລິກເຊິ່ງກວ່າ.

## 8. ຂໍ້ຈຳກັດຂອງການຄົ້ນຄ້ວາ

1) ຂອບເຂດກຸ່ມຕົວຢ່າງ ການຄົ້ນຄວ້າຄັ້ງນີ້ສຸມໃສ່ສະເພາະໂຮງຮຽນພາກເອກະຊົນໃນເມືອງໄຊເສດຖາເທົ່ານັ້ນ, ເຊິ່ງອາດຈະບໍ່ສາມາດເປັນຕົວແທນໃຫ້ແກ່ໂຮງຮຽນພາກລັດ ຫຼື ໂຮງຮຽນໃນເມືອງອື່ນໆໃນນະຄອນຫຼວງວຽງຈັນໄດ້.

2) ວິທີການເກັບກຳຂໍ້ມູນສ່ວນໃຫຍ່ແມ່ນໃຊ້ແບບສອບຖາມ (ແບບປະລິມານ). ການຂາດການສຳພາດ (ແບບຄຸນນະພາບ) ເພີ່ມເຕີມອາດເຮັດໃຫ້ການອະທິບາຍຜົນຂອງບາງບັນຫາທີ່ສັບສົນ (ເຊັ່ນ: ບັນຫາວິໄນຂອງນັກຮຽນ) ບໍ່ເລິກເຊິ່ງເທົ່າທີ່ຄວນ.

3) ເວລາໃນການຄົ້ນຄວ້າການຄົ້ນຄວ້າດຳເນີນໃນໄລຍະເວລາທີ່ຈຳກັດ, ອາດຈະບໍ່ສາມາດເຫັນຜົນການປ່ຽນແປງຂອງການປະຕິບັດ 3 ຂໍ້ແຂ່ງຂັນໃນໄລຍະຍາວໄດ້.

## 9. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2017). ຍຸດທະສາດການພັດທະນາການສຶກສາ ແລະ ກິລາ ແຫ່ງຊາດ 2020-2025. ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2013). ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ. ນະຄອນຫຼວງວຽງຈັນ,: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2020). ແຜນພັດທະນາການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2021-2025). ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2020). ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ່ IX (2021-2025). ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2020). ວິໄສທັດ ຮອດປີ 2030, ແຜນຍຸດທະສາດການພັດທະນາຄູ ແລະ ບຸກຄາລາກອນຂອງຂະແໜງການສຶກສາທີ່ການ ແລະ ກິລາ ຮອດປີ 2030. ນະຄອນຫຼວງວຽງຈັນ: ໂຮງພິມສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2021). ບົດສະຫຼຸບການຈັດຕັ້ງປະຕິບັດ ແຜນພັດທະນາການສຶກສາ ແລະ ກິລາ ປະຈຳສົກຮຽນ 2020-2021 ແລະ ແຜນພັດທະນາການສຶກສາ ແລະ ກິລາ ປະຈຳສົກຮຽນ 2021-2022. ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2022). ຄຳສັ່ງວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂປະກົດການຍໍ້ທໍ້ໃນຂະແໜງການສຶກສາທິການ ແລະ ກິລາ. ນະຄອນຫຼວງວຽງຈັນ: ກົມກວດກາ.

ໄຊຍົດ ເຮືອງສຸວັນ. (2533). ເຕັກໂນໂລຊີການສອນ:ການອອກແບບ ແລະ ພັດທະນາ. ກຣຸງເທບມະຫານະຄອນ: ໂອ.ເອສ.ພຣິນຕິງເຮົາສ໌.

ບຸນຊົມ ສີສະອາດ. (2545). *ການວິໄຈເບື້ອງຕົ້ນ(ພິມເທື່ອທີ 10).* ກຸງເທບ: ສຸລິຍະສານ.

ບົດລາຍງານການປະເມີນຄຸນນະພາບການສຶກສາ. (2022). ບົດລາຍງານການປະເມີນຄຸນນະພາບການສຶກສາລະດັບຊາດ. ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະກິລາ.

ໄພທູນ ສິນລາຣັດ. (2526). ອົງປະກອບຂອງການຮຽນ-ການສອນ. ນົນທະບູລີ: ມະຫາວິທະຍາໄລສຸໂຂໄທທຳມະທິລາດ.

ໂຮງຮຽນມັດທະຍົມສົມບູນເສດຖາ. (2023). ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ. ນະຄອນຫຼວງວຽງຈັນ: ໂຮງຮຽນມັດທະຍົມສົມບູນເສດຖາ.

ໂຮງຮຽນມັດທະຍົມສົມບູນໂພນທັນ. (2023). ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ. ນະຄອນຫຼວງວຽງຈັນ: ໂຮງຮຽນມັດທະຍົມສົມບູນໂພນທັນ.

Ajit Roy. (2020). *A Comprehensive Guide for Design, Collection, Analysis and Rating Scale Data Analysis* . USA: KDP US print.

Armstrong, M. (1995). *A Handbook of Personal Management Practice*. London: Kogan.

Beach, D. S. (1980). *The Management of people at Work*. New York: Macmillan.

Castetter, W. (1996). *The personnel function in education administration.* New York: Macmillan.

D. S Beach. (1980). *The Management of people at Work* . New York: Macmillan.